ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ** ເລກທີ 282 /ຫສນຍ

ນະຄອນຫລວງວຽງຈັນ, ວັນທີ 19.03.2021

ກະຊວງອຸດສາຫະກຳ ແລະ ການຄ້າ
ຂາເຂົ້າ ເລກທີ 0585
ວັນທີ 29/3/21

**ແຈ້ງການ**

**ຮຽນ:** - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ຫົວໜ້າຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ທີ່ເຄົາລົບ.

- ທ່ານ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖື. ✓
- ທ່ານ ເຈົ້າແຂວງຫຼວງນ້ຳທາ ທີ່ນັບຖື.

**ເລື່ອງ :** ທິດຊີ້ນຳຕໍ່ການສະເໜີເປີດດ່ານທ້ອງຖິ່ນ ເພື່ອສົ່ງອອກສັດໃຫ່ຍ ແລະ ສິນຄ້າກະສິກຳ ໄປສປ ຈີນ ຢູ່ແຂວງຫຼວງນ້ຳທາ.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 03 ມີນາ 2017;
- ອີງຕາມໜັງສືສະເໜີ ສະບັບເລກທີ 0102/ກປ, ລົງວັນທີ 22 ກຸມພາ 2021 ຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມຜົນກອງປະຊຸມກອງເລຂາ ຄະນະສະເພາະກິດ ຮ່ວມກັບພາກສ່ວນກ່ຽວຂ້ອງ ໃນວັນທີ 10 ມີນາ 2021 ທີ່ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
- ອີງຕາມການຕົກລົງ ແລະ ຊີ້ນຳຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ຫົວໜ້າຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ COVID-19 ໃນວັນທີ 18 ມີນາ 2021.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ຫົວໜ້າຄະນະສະເພາະກິດ ມາຍັງທ່ານຊາບ ດັ່ງນີ້: **ເຫັນດີໃຫ້ເປີດດ່ານທ້ອງຖິ່ນປາງໄຮ, ແຂວງຫຼວງນ້ຳທາ** ເພື່ອສົ່ງອອກ **ສັດໃຫ່ຍ ແລະ ສິນຄ້າກະສິກຳ ໄປ ສປ ຈີນ ສະເພາະ, ບໍ່ອະນຸຍາດໃຫ້ບຸກຄົນທົ່ວໄປເຂົ້າ-ອອກ ຜ່ານດ່ານດັ່ງກ່າວ ຢ່າງເດັດຂາດ.** ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງແຂວງຫຼວງນ້ຳທາ ເປັນໃຈກາງສົມທົບກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິ

ບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ, ທັງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດ COVID-19 ຕາມຄະນະສະເພາະກິດຂັ້ນສູນກາງ ໄດ້ກຳນົດ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ໃຊ້ແທນ ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ
ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ສາລາວັນ ຈັນທະລາວັນ

ບ່ອນນຳສົ່ງ:

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ກະຊວງແຜນການ ແລະ ການລົງທຶນ | 01 ສະບັບ |
| 4. ກະຊວງການຕ່າງປະເທດ | 01 ສະບັບ |
| 5. ກະຊວງສາທາລະນະສຸກ | 01 ສະບັບ |
| 6. ຄະນະ ຫສນຍ | 04 ສະບັບ |
| 7. ສຳເນົາ | 01 ສະບັບ |